**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

**ບໍລິສັດ ດັກລັກ ຣັບເບີ ຈໍາກັດ**

DAKLAORUCO ເລກທີ : 03/ລບ- ບສ

*ປາກເຊ, ວັນທີ 27 ເດືອນ 3 ປີ 2024*

**ກົດລະບຽບ**

**ວ່າດ້ວຍການຄຸ້ມຄອງແລະນໍາໃຊ້ຢາປ້ອງກັນ, ປິ່ນປົວພະຍາດ ໜ້າຂີດທີ່ເກີດຈາກເຊື້ອລາ**

- ອີງຕາມມາດຕະຖານແຫ່ງຊາດ ສະບັບຊົ່ວຄາວ ກ່ຽວກັບການຄຸ້ມຄອງປ່າໄມ້ແບບຍືນຍົງຂອງ ສປປ ລາວ FSC-STD-LAO-01-2020;
- ອີງຕາມກົດໝາຍວ່າດ້ວຍ ປ່າໄມ້ (ສະບັບປັບປຸງ) ປີ 2019 ຂອງ ສປປ ລາວ;
- ອີງຕາມກົດໝາຍວ່າດ້ວຍການປົກປັກຮັກສາສິ່ງແວດລ້ອມ (ສະບັບປັບປຸງ) ປີ 2012 ຂອງ ສປປ ລາວ;
- ພິຈາລະນາການສະເໜີຂອງຫ້ອງເຕັກນິກ-ການຜະລິດຂອງບໍລິສັດ.

**ດັ່ງນັ້ນ, ອໍານວຍການບໍລິສັດຈຶ່ງໄດ້ອອກກົດລະບຽບວ່າດ້ວຍການນໍາໃຊ້ຢາປ້ອງກັນແລະປິ່ນປົວ ພະຍາດ ໜ້າຂີດທີ່ເກີດຈາກເຊື້ອລາ ດັ່ງຕໍ່ໄປນີ້:**

**1.** ຊື່ຢາ: Rinh Myn 720WP (Metalaxy + Mancozeb)

**2.** ປະລິມານການນໍາໃຊ້: ການປະສົມຢາດ້ວຍຄວາມເຂັ້ມ 1,5%. ໃສ່ຢາ Rinh Myn 720WP 30g ເຂົ້າໃນພາຊະນະບັນຈຸແລະປະສົມໃສ່ກັບນໍ້າສະອາດ 2 ລິດ, ໃຊ້ໄມ້ສະອາດຄົນປະສົມໃຫ້ເຂົ້າກັນຈົນກວ່າຢາຈະລະລາຍໝົດ.

**3.** ຄວາມປອດໄພ ແລະ ສຸຂະອະນາໄມແຮງງານ:

3.1 ຊຸດປ້ອງກັນແຮງງານມີ: ຊົບມືການແພດ, ຜ້າອັດປາກອະນາໄມ, ແປງທາ ຫລື ແປງຖູແຂ້ວ….

3.2 ຄວາມປອດໄພແຮງງານແລະການປະຖົມພະຍາບານເບື້ອງຕົ້ນ:

- ຫຼີກລ່ຽງການສູດດົມຢາ, ບໍ່ໃຫ້ຢາຖືກກັບປາກຜິວໜັງ ແລະ ຕາ.
- ຖ້າຫາກຢາຖືກກັບເຄື່ອງນຸ່ງຮົ່ມແມ່ນໃຫ້ແກ້ອອກທັນທີ ແລະ ລ້າງດ້ວຍນໍ້າສະອາດ. ຫລັງຈາກນໍາໃຊ້ຢາແລ້ວແມ່ນໃຫ້ລ້າງມື, ຕີນ ແລະ ອາບນໍ້າ, ລ້າງຊຸດປ້ອງກັນແຮງງານໃຫ້ສະອາດ.

**4.** ຂັ້ນຕອນໃນການທາຢາ:

ນໍາໃຊ້ແປງທາຢາ (ມີຄວາມກ້ວາງ 1,5 ຊມ) ທາ 1 ຊັ້ນ ໃຫ້ສະໝໍ່າສະເໝີ ແຕ່ ປາກປາຍສາກ ລົງຮອດປາກກົກສາກ ດ້ວຍຄວາມກ້ວາງ 2-3 ຊມ, ທາບໍ່ໃຫ້ທົ່ວ. ທາເທິງໜ້າຂີດ, ຈາກປາກຂີດລົງໄປຮອດສ່ວນເປືອກທີ່ເກີດຂຶ້ນໃຫມ່ສໍາລັບ ຂີດຂວັ້ນ ແລະ ຈາກປາກຂີດ ຂຶ້ນໄປ ສ່ວນເປືອກທີ່ເກີດໃຫມ່ ສໍາລັບຂີດ ຫງາຍ.

- ດໍາເນີນການທາ 01 ມື້ ຫລັງຈາກຂີດແລ້ວ.
- ທາຖືກຕາມປະລິມານ ແລະ ເວລາ ທີ່ກໍານົດ ເພື່ອໃຫ້ຢາມີປະສິດທິພາບສູງສຸດ.
- ປະຕິບັດການທາຢາໃຫ້ຄົບ ແຕ່ລະເບີຂີດ, ສວນຂີດ.
- ທາຢາເວລາມີແສງແດດ, ບໍ່ທາໃນຍາມທີ່ໜ້າຂີດຍັງປຽກຊຸ່ມ ຫລື ຕອນທີ່ຝົນໃກ້ຈະຕົກ.

- ກະກຽມແຮງງານ ເພື່ອປະຕິບັດການທາຢາໃຫ້ພ້ອມພຽງສະຫມໍ່າສະເຫມີຢູ່ໃນສວນ. ແຕ່ງຕັ້ງພະນັກງານເຕັກນິກ ປະຕິບັດການຕິດຕາມ ແລະ ກວດກາ ຂະບວນການທາຢາ.

**5.** ຈັດຕັ້ງຝຶກອົບຮົມກ່ອນນຳໃຊ້ຢາ:

- ຝຶກອົບຮົບການນໍາໃຊ້ຊຸດປ້ອງກັນແຮງງານ.
- ຝຶກອົບຮົບດ້ານຄວາມປອດໄພ, ສຸຂະອະນາໄມແຮງງານ ແລະ ການປະຖົມພະຍາບານຂັ້ນຕົ້ນ.
- ແນະນໍາຂັ້ນຕອນການປະສົມຢາແລະເຕັກນິກການທາຢາ.
- ເກັບມ້ຽນແລະທໍາຄວາມສະອາດອຸປະກອນ, ພາຊະນະຫຸ້ມຫໍ່ພາຍຫຼັງການນໍາໃຊ້.

**6.** ເກັບມ້ຽນອຸປະກອນ, ຈັດການພາຊະນະຫຸ້ມຫໍ່

- ສໍາລັບອຸປະກອນທາຢາມີ: ສົບມື, ແປງທາຢາ, ພາຊະນະບັນຈຸຢາ ພາຍຫຼັງທີ່ທາຢາແລ້ວຕ້ອງລ້າງໃຫ້ສະອາດເກັບໄວ້ໃນສະຖານທີ່ທີ່ເໝາະສົມ ເພື່ອໄວ້ໃຊ້ໃນສວນຕໍ່ໄປ.
- ຜ້າອັດປາກ, ພາຊະນະຫຸ້ມຫໍ່ຢາ ພາຍຫຼັງນໍາໃຊ້ແລ້ວຕ້ອງເກັບມ້ຽນແລະຈັດການຕາມລະບຽບ.

**7.** ຕິດຕາມກວດກາການຈັດຕັ້ງປະຕິບັດ: ແຕ່ງຕັ້ງພະນັກງານຕິດຕາມກວດກາການຈັດຕັ້ງປະຕິບັດ ຮັບປະກັນການປະຕິບັດໃຫ້ຖືກຕ້ອງຕາມເນື້ອໃນທີ່ໄດ້ລະບຸໄວ້ຂ້າງເທິງ, ປັບປຸງແກ້ໄຂໃນກໍລະນີມີບັນຫາເກີດຂຶ້ນໃນຂັ້ນຕອນການນໍາໃຊ້ຢາ.

**8.** ສາງທີ່ບັນຈຸ ແລະ ຄຸ້ມຄອງຢາ: ຕ້ອງອອກແບບສະຖານທີ່, ແລະຈັດວາງຖ້ານຮອງເພື່ອວາງຢາ Rinh Myn ແຍກອອກຈາກອຸປະກອນອື່ນ. ເບີກຢາອອກນໍາໃຊ້ເມື່ອມີແຜນການຈາກບໍລິສັດ ແລະ ມີເອກະສານຄົບຖ້ວນຕາມລະບຽບ.

ຂ້າງເທິງນີ້ແມ່ນກົດລະບຽບວ່າດ້ວຍການຄຸ້ມຄອງແລະນໍາໃຊ້ຢາປ້ອງກັນ, ປິ່ນປົວພະຍາດ ໜ້າຂີດທີ່ເກີດຈາກເຊື້ອລາ. ໃຫ້ບັນດາຫ້ອງການທີ່ກ່ຽວຂ້ອງ ແລະ ບັນດານິຄົມຈົ່ງນໍາໄປຈັດຕັ້ງປະຕິບັດ.

**ອໍານວຍການບໍລິສັດ**

*ບ່ອນນໍາສົ່ງ:*

- ຄະນະອໍານວຍການບໍລິສັດ;
- ຫ້ອງການຂອງບໍລິສັດ;
- ບັນດາຫນ່ວຍງານ;
- ສໍາເນົາຂາອອກຂາເຂົ້າ, ຄະນະ FSC.

ກະຊວງ ກະສິກໍາ ແລະ ປ່າໄມ້ ບໍລິສັດ ດັກລັກ ຣັບເບີ ຈໍາກັດ DAKLAK RUBBER CO.,LTD ແຂວງ ຈໍາປາສັກ

*Nguyễn Đức Hạnh*